ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການ

ເລກທີ 4253 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 27/ຕ/2026

ໜັງສືແຈ້ງເຊີນປະມູນ

1. ກະຊວງການເງິນ ໄດ້ຮັບງົບປະມານ ລົງທຶນຂອງລັດ ປີ 2026 ເພື່ອດຳເນີນໂຄງການກໍ່ສ້າງຕຶກສຳນັກງານ ກະຊວງການເງິນ ຫຼັງໃໝ່, ຫ້ອງການກະຊວງການເງິນ ຈຶ່ງຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີຄຸນວຸທິເໝາະສົມເຂົ້າຍື່ນຊອງປະມູນ ສຳລັບໂຄງການວ່າຈ້າງທີ່ປຶກສາການກໍ່ສ້າງຕຶກກະຊວງການເງິນ ຫຼັງໃໝ່;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນວຸທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ຖືກຕ້ອງ ຕາມກົດໝາຍ ທີ່ກ່ຽວພັນກັບທີ່ປຶກສາການກໍ່ສ້າງຕຶກອາຄານດັ່ງກ່າວ, ມີໃບຢັ້ງຢືນການເສຍອາກອນ ປີ 2025 ແລະ ມີເງື່ອນໄຂທີ່ໄດ້ກຳນົດໄວ້ເອກະສານປະມູນ (ຄັດຕິດມາພ້ອມນີ້);
4. ບໍລິສັດທີ່ມີຄຸນວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການກະຊວງການເງິນ ໂທ 021 412 409 ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ພະແນກບໍລິຫານ ຫ້ອງການກະຊວງການເງິນ, ຕາມເວລາໂມງວຽກ ທາງລັດຖະການ;
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ຫ້ອງການກະຊວງ ການເງິນ, ເລີ້ມແຕ່ວັນທີ 27 ຕຸລາ 2026 ຫາ 01 ທັນວາ 2026, ໃນລາຄາຊອງລະ 5,000,000 ກີບ (ຫ້າ ລ້ານກີບ), ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ;
6. ຊອງປະມູນຕ້ອງສົ່ງກ່ອນເວລາ 13:00 ໂມງ ຂອງວັນທີ 01 ທັນວາ 2026. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາ ທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 01 ທັນວາ 2026 ທີ່ຫ້ອງປະຊຸມຊັ້ນ 3 ຕຶກ B ກະຊວງການເງິນ ໂດຍຊ້ອງໜ້າຄະນະ ກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ ຕາມສະຖານທີ່ຂ້າງເທິງນີ້;
7. ທຸກໆ ຊອງປະມູນຕ້ອງໄດ້ ມີໜັງສືຄ້ຳປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫຼຸດ 2% ຂອງລາຄາ ສະເໜີເຂົ້າປະມູນ.

ຫົວໜ້າຫ້ອງການ

ວິໄລພອນ ປຸ້ຍດວງແກ້ວ